# ແຜນປະຕິບັດງານ
# ເພື່ອແກ້ໄຂບັນຫາທີ່ຜູ້ຄ້າພົບພໍ້ໃນ ການນຳເຂົ້າ ແລະ ສົ່ງອອກສິນຄ້າຜ່ານແດນ ຜ່ານ ສສ ຫວຽດນາມ ແລະ ຣາຊາອານາຈັກໄທ

## ສຳລັບ

## ກົມການນຳເຂົ້າ ແລະ ສົ່ງອອກ

## ກະຊວງອຸດສາຫະກຳ ແລະ ການຄ້າ

## ບົດລາຍງານ

## ມັງກອນ 2019

# ສາລະບານ

ບົດນຳ ..... 3

ຫຼັກການຂອງແຜນດຳເນີນງານ ..... 3

ໄລຍະການຈັດຕັ້ງປະຕິບັດແຜນດຳເນີນງານການຄ້າຜ່ານແດນ (TTAP) ..... 3

ແຜນດຳເນີນງານການຄ້າຜ່ານແດນ (2019-2022) ..... 4

ບາດກ້າວຕໍ່ໄປ ..... 6

## ບົດນຳ

ຈຸດປະສົງຫຼັກຂອງ ແຜນດຳເນີນງານການຄ້າຜ່ານແດນ (TTAP) ແມ່ນເພື່ອນຳສະເໜີ ການເຄື່ອນໄຫວທີ່ເປັນຮູບປະທຳ ແລະ ຂັ້ນຕອນການຈັດຕັ້ງປະຕິບັດ ໃນການແກ້ໄຂບັນຫາການຄ້າຜ່ານແດນ ທີ່ລະບຸໄວ້ໃນບົດສຶກສາເບື້ອງຕົ້ນ. ກຳນົດການຂອງ TTAP ແມ່ນສອດຄ່ອງກັບກັບ ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າປີ (2018-2022).

## ຫຼັກການຂອງແຜນດຳເນີນງານ

ແຜນດຳເນີນງານຄວນປະຕິບັດຕາມ ຂອບວຽກ SMART ດັ່ງລຸ່ມນີ້:

**ອັນສະເພາະ (Specific)** – ຈຸດປະສົງຕ້ອງເຮັດໃຫ້ຊັດເຈນ ແລະ ລະອຽດ.

**ສິ່ງທີ່ສາມາດປະເມີນໄດ້ (Measurable)** – ຜົນໄດ້ຮັບຈາການຄົ້ນຄວ້າຕ້ອງມີການປະເມີນ. ແລະ ຄວນສ້າງຜົນຕອບຮັບທີ່ເປັນຮູບປະທຳ.

**ການຕົກລົງ (Agreement)** – ບັນດາຜູ້ທີ່ມີສ່ວນຮ່ວມກັບແຜນດຳເນີນງານດັ່ງກ່າວ ຄວນເຫັນດີເຊິ່ງກັນ ແລະ ກັນ.

**ຄວາມເປັນຈິງ (Realistic)** – ບັນດາຜູ້ທີ່ມີສ່ວນຮ່ວມຕ້ອງເຊື່ອໝັ້ນວ່າ ແຜນດຳເນີນງານ ຈະສາມາດບັນລຸໄດ້.

**ກຳນົດເວລາ** – ຄວນມີການກຳນົດເວລາແກ່ປະຕິບັດງານໃນແຕ່ລະຂັ້ນ. ລວມທັງເປົ້າໝາຍທີ່ສຳຄັນທີ່ສຸດ. ເຊິ່ງການກຳນົດເວລາດັ່ງກ່າວບໍ່ວ່າຈະສັ້ນຫຼື ຍາວ ແມ່ນຕ້ອງຮັບປະກັນວ່າຈະສາມາດຮັບມື ແລະ ສ້າງປະສິດທິພາບໄດ້ພໍສົມຄວນ ໃນຕໍ່ໜ້າ.

## ໄລຍະການຈັດຕັ້ງປະຕິບັດແຜນດຳເນີນງານການຄ້າຜ່ານແດນ (TTAP)

ແຜນດຳເນີນງານການຄ້າຜ່ານແດນ ສາມາດແບ່ງອອກເປັນ 4 ໄລຍະດັ່ງນີ້:

**ໄລຍະເລີ່ມຕົ້ນ (ກຸມພາ 2019 – ເມສາ 2019)**. ຈຸດປະສົງຂອງໄລຍະນີ້ ແມ່ນເພື່ອຮັບປະກັນ ການອະນຸມັດສຳລັບ ແຜນດຳເນີນງານການຄ້າຜ່ານແດນ (TTAP).

**ໄລຍະສັ້ນ (ເມສາ 2019 - ທັນວາ 2019)**. ໄລຍະນີ້ແມ່ນເນັ້ນໃສ່ ການຈັດຕັ້ງປະຕິບັດມາດຕະການທີ່ສຳຄັນ ຕາມທີ່ລະບຸໄວ້ໃນ ບົດຄົ້ນຄວ້າການຄ້າຜ່ານແດນ (ຕຍ ສ້າງຄວາມໂປ່ງໃສໃຫ້ແກ່ຜູ້ຄ້າ ໂດຍຜ່ານການປະກາດໃຊ້ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບລະບຽບການ, ເງື່ອນໄຂການປະກອບເອກະສານ ແລະ ຄ່າທຳນຽມຕ່າງໆທີ່ຕິດພັນກັບການຄ້າຜ່ານແດນ; ການກຳນົດຈຸດສອບຖາມຂໍ້ມູນໃນຂະແໜງການລັດຖະບານທີ່ກ່ຽວຂ້ອງ). ນອກຈາກນີ້, ການປະຕິບັດງານໃນໄລຍະດັ່ງກ່າວຍັງປະກອບມີ ການພັດທະນາແຜນຍຸດທະສາດການສ້າງຄວາມສາມາດໃຫ້ແກ່ ນິຕິບຸກຄົນທີ່ມີສ່ວນພົວພັນກັບການຄ້ານຜ່ານແດນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ພ້ອມດຽວກັນນັ້ນ, ບົດລາຍງານຍັງໄດ້ເນັ້ນໃສ່ອຸປະສັກທາງດ້ານນິຕິກຳ ແລະ ຂໍ້ບັງຄັບ ເປັນຕົ້ນແມ່ນ ການກຳນົດໃຫ້ພາຫະນະຂົນສົ່ງໄທ ສາມາດເຄື່ອນໄຫວຢູ່ໃນ ສປປ ລາວ ໄດ້ພຽງແຕ່ 3 ວັນ ແລະ ການບໍ່ອະນຸຍາດໃຫ້ມີການຂົນສົ່ງສັດຜ່ານແດນ ສປປ ລາວ ລວມທັງ ນ້ຳມັນປາມຜ່ານແດນປະເທດໄທ. ທັງນີ້ຍັງປະກອບມີ ການຈັດກອງປະຊຸມ 3 ຝ່າຍ ເຊິ່ງເຂົ້າຮ່ວມໂດຍ ສປປ ລາວ, ໄທ ແລະ ຫວຽດນາມ ເພື່ອປະເມີນບັນຫາດັ່ງກ່າວ ລວມທັງ ສຳຫຼວດຄວາມຄືບໜ້າຂອງແຕ່ລະປະເທດໃນການນຳໃຊ້ ນິຕິກຳແຫ່ງຊາດ ແລະ ຂໍ້ຕົກລົງສອງຝ່າຍ ເພື່ອສອດຄ່ອງກັບ CBTA ແລະ ACTS.

ນອກນັ້ນ, ການຈັດຕັ້ງປະຕິບັດງານໃນໄລຍະນີ້ ຍັງເປີດໂອກາດໃຫ້ພາກເອກະຊົນມີສ່ວນຮ່ວມ. ກອງປະຊຸມທຸລະກິດລາວ (LBF) ຂອງໜ່ວຍງານປຶກສາຫາລືການຄົມມານາຄົມຂົນສົ່ງຈະໄດ້ຈັດຂຶ້ນເພື່ອແກ້ໄຂບັນຫາການເກັບຄ່າທຳນຽມທີ່ບໍ່ເປັນທາງການ ທີ່ກຳລັງພົ້ນເດັ່ນໃຫ້ແກ່ຜູ້ຄ້າໃນ ສປປ ລາວ. ສຸດທ້າຍນີ້, ຍັງລວມມີການຈັດກອງປະຊຸມຄະນະກຳມາທິການຂົນສົ່ງອານຸພາກພື້ນແມ່ນ້ຳຂອງ ເພື່ອເປັນການປະເມີນສະຖານະພາບຂອງແຜນການຈັດຕັ້ງປະຕິບັດແຜນງານ "Early Harvest".

**ໄລຍະກາງ (ມັງກອນ-ທັນວາ 2020).** ການຈັດຕັ້ງປະຕິບັດງານໃນໄລຍະນີ້ ແມ່ນເນັ້ນໃສ່ ການຈັດຝຶກອົບຮົມ ແນ່ໃສ່ການສ້າງຄວາມສາມາດໃຫ້ແກ່ ເຈົ້າໜ້າທີ່ຂອງຂະແໜງການລັດທີ່ກ່ຽວຂ້ອງ ເພື່ອໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ສາມາດຈັດຕັ້ງປະຕິບັດຕາມສັນຍາການຄ້າຜ່ານແດນໃຫ້ມີຜົນສຳເລັດ. ນອກຈາກນີ້, ຍັງຈະມີການຈັດກອງປະຊຸມປຶກສາຫາລືຢູ່ຕາມຈຸດຊາຍແດນທີ່ສຳຄັນໃນການດຳເນີນການຂົນສົ່ງຜ່ານແດນປະຈຳຝ່າຍໄທ ແລະ ຫວຽດນາມ ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະສານງານກັນລະຫວ່າງພາກເອກະຊົນ ແລະ ເຈົ້າໜ້າທີ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ໃນໄລຍະນີ້ຍັງມີລວມທັງການລິເລີ່ມແຜນດຳເນີນງານ ເພື່ອປະຕິຮູບ ອຸດສາຫະກຳການຂົນສົ່ງຂອງ ສປປ ລາວ ໃຫ້ມີຄວາມທັນສະໄໝ ໂດຍການນຳສະເໜີລະບຽບການ ທີ່ແນ່ໃສ່ສົ່ງເສີມໃຫ້ມີຜູ້ເຂົ້າຮ່ວມໃໝ່ໃນຕະຫຼາດເຊັ່ນດຽວກັບ ອຳນວຍຄວາມສະດວກໃຫ້ແກ່ການຮ່ວມລົງທຶນລະຫວ່າງບໍລິສັດຂົນສົ່ງພາຍໃນ ແລະ ຕ່າງປະເທດ.

**ໄລຍະຍາວ (ມັງກອນ 2021-ທັນວາ 2022).** ການຈັດຕັ້ງປະຕິບັດງານໃນໄລຍະນີ້ ແມ່ນຍັງສືບຕໍ່ປະຕິບັດແຜນການຂອງໄລຍະທີ່ຜ່ານມາ ເພື່ອເປັນການປັບປຸງຄວາມສາມາດໃນການແຂ່ງຂັນຂອງອຸດສາຫະກຳການຂົນສົ່ງໃນ ສປປ ລາວ. ເຖິງຢ່າງໃດກໍຕາມ, ຈຸດປະສົງຫຼັກແມ່ນ ການປະເມີນຜົນການຈັດຕັ້ງປະຕິບັດ TTAP ໃນໄລຍະກາງ ແລະ ສຸດທ້າຍ. ບັນດາແຜນການດຳເນີນງານດັ່ງກ່າວນີ້ ແມ່ນຈະຖືກຈັດລຽງ ເພື່ອຮັບປະກັນວ່າ ມີເວລາພຽງພໍ ໃນການຮວບຮວມຂໍ້ມູນ ແລະ ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ ຜົນການປະເມີນ ດັ່ງກ່າວມີຄວາມຖືກຕ້ອງທີ່ສຸດ. ຂັ້ນຕອນສຸດທ້າຍຂອງການຈັດຕັ້ງປະຕິບັດງານໄລຍະສຸດທ້າຍນີ້ ແມ່ນລວມເອົາການກະກຽມແຜນດຳເນີນງານການຄ້າຜ່ານແດນສະບັບໃໝ່ ເຊິ່ງອີງຕາມຜົນໄດ້ຮັບຈາກການປະເມີນຄັ້ງ.

## ແຜນດຳເນີນງານການຄ້າຜ່ານແດນ (2019-2022)

### ຕາຕະລາງການຈັດຕັ້ງປະຕິບັດ TTAP

| ມາດຕະການຍຸດທະສາດ | # ລຳດັບ | ໜ້າວຽກ | ໄລຍະເວລາ | ໜ່ວຍງານຮັບຜິດຊອບ |
|---|---|---|---|---|
| **ການກະກຽມຈັດຕັ້ງປະຕິບັດ** | 1 | ຂໍອະນຸຍາດ ແຜນດຳເນີນງານ ການຄ້າຜ່ານແດນ ສົກປີ 2019-2022 | ກຸມພາ – ເມສາ 2019 | ກົມການນຳເຂົ້າ ແລະ ສົ່ງອອກ |
| **ມາດຕະການທີ່ສຳຄັນໃນການປັບປຸງການຄ້າຜ່ານແດນເຊັ່ນ ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການສ້າງຄວາມສາມາດໃນການຈັດຕັ້ງປະຕິບັດແຜນປະຕິບັດງານ** | 2 | ກະກຽມ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບຂັ້ນຕອນການຄ້າຜ່ານແດນ, ເງື່ອນໄຂການແລ່ນເອກະສານ ແລະ ຄ່າທຳນຽມໃນ ເວັບໄຊ ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ, ສຄອຊ ແລະ ທຸກໆ ເວັບໄຊ ຂອງຂະແໜງການລັດຖະບານທີ່ມີສ່ວນພົວພັນກັບການຄ້າຜ່ານແດນ. ກຳນົດຈຸດສອບຖາມໃນແຕ່ລະຂະແໜງການລັດຖະບານ. ປະເມີນຄວາມເປັນໄປໄດ້ໃນການນຳໃຊ້ ແອັພໂທລະສັບມືຖືກ່ຽວກັບ ການຄ້າຜ່ານແດນ ສປປ | ພຶດສະພາ – ກັນຍາ. 2019 | ທຸກຂະແໜງການ ລັດຖະບານທີ່ກ່ຽວຂ້ອງ |

| | | | | |
|---|---|---|---|---|
| | | ລາວ (Lao PDR Transit Trade Mobile App) | | |
| | 3 | ສ້າງຄວາມສາມາດໃນການປະຕິບັດແຜນຍຸດທະສາດ ແກ່ບັນດາເຈົ້າໜ້າທີ່ທັງສູນກາງ ແລະ ທ້ອງຖິ່ນ ທີ່ມີສ່ວນພົວພັນກັບການຄ້າຜ່ານແດນ | ມິຖຸນາ 2019 – ກັນຍາ. 2019 | ທຸກຂະແໜງການ ລັດຖະບານທີ່ກ່ຽວຂ້ອງ |
| **ການຮ່ວມມືຂ້າມແດນ ແລະ ເຊື່ອມໂຍງໃນພາກພື້ນ** | 4 | ຈັດກອງປະຊຸມ ສາມຝ່າຍ ປະກອບມີ ສປປ ລາວ, ໄທ ແລະ ຫວຽດນາມ ເພື່ອປະເມີນ ແລະ ກຳນົດວິທີການແກ້ໄຂ ບັນຫາທີ່ໄດ້ລະບຸໃນບົດຄົ້ນຄວ້າການຄ້າຜ່ານແດນ ເຊັ່ນວ່າ: ລະບຽບການທີ່ກຳນົດໃຫ້ລົດບັນທຸກໄທເຄື່ອນໄຫວຢູ່ ສປປ ລາວ ໄດ້ພຽງ 3 ວັນ; ການບໍ່ອະນຸຍາດໃຫ້ມີຂົນສົ່ງນ້ຳມັນປາມຜ່ານແດນໄທ; ການບໍ່ອະນຸຍາດໃຫ້ຂົນສົ່ງສັດຂ້າມແດນໃນ ສປປ ລາວ; ລວມທັງ ການເຂົ້າເຖິງ ທ່າເຮືອ ແລະ ສາງສິນຄ້າໃນ ປະເທດໄທ. ນອກນັ້ນ, ທັງ ສາມປະເທດຍັງໄດ້ມີການປະເມີນ ຄວາມສອດຄ່ອງຂອງນິຕິກຳແຫ່ງຊາດ ແລະ ສົນທິສັນຍາສາມຝ່າຍ ເປັນຕົ້ນແມ່ນ ACTS ແລະ CBTA ພ້ອມທັງເປັນການແກ້ໄຂບັນຫາທີ່ຍັງຄົງຄ້າງຕ່າງໆ. | ເມສາ – ມິຖຸນາ 2019 | ກົມການນຳເຂົ້າ ແລະ ສົ່ງອອກ |
| | 5 | ຈັດກອງປະຊຸມຄະນະກຳມາທິການຂົນສົ່ງອານຸພາກພື້ນແມ່ນ້ຳຂອງ ເພື່ອເປັນການປະເມີນສະຖານະພາບຂອງແຜນການຈັດຕັ້ງປະຕິບັດແຜນງານ “Early Harvest”. | ພະຈິກ.- ທັນວາ. 2019 | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກົມການນຳເຂົ້າ ແລະ ສົ່ງອອກ |

| ມາດຕະການຍຸດທະສາດ | # ລຳດັບ | ໜ້າວຽກ | ໄລຍະເວລາ | ໜ່ວຍງານຮັບຜິດຊອບ |
|---|---|---|---|---|
| ການຮ່ວມງານກັບພາກເອກະຊົນ | 6 | ຈັດກອງປະຊຸມທຸລະກິດລາວ (LBF) ຂອງໜ່ວຍງານປຶກສາຫາລືການຄົມມານາຄົມຂົນສົ່ງ ເພື່ອແກ້ໄຂບັນຫາການເກັບຄ່າທຳນຽມທີ່ບໍ່ເປັນທາງການ ທີ່ກຳລັງເປັນບັນຫາພົ້ນເດັ່ນແກ່ຜູ້ຄ້າ | ມິຖຸນາ – ກໍລະກົດ 2019 | ກົມການນຳເຂົ້າ ແລະ ສົ່ງອອກ, ກົມພາສີ |
| | 7 | ວາງຮູບແບບ ແລະ ລິເລີ່ມແຜນດຳເນີນງານເພື່ອປະຕິຮູບ ອຸດສາຫະກຳການຂົນສົ່ງຂອງ ສປປ ລາວ. ລວມທັງການນຳໃຊ້ລະບຽບການ ທີ່ແນ່ໃສ່ ການສົ່ງເສີມໃຫ້ມີຜູ້ເຂົ້າຮ່ວມກຸ່ມຕະຫຼາດການຂົນສົ່ງໃໝ່ ແລະ ອຳນວຍຄວາມສະດວກແກ່ ການຮ່ວມລົງທຶນລະຫວ່າງບໍລິສັດຂົນສົ່ງພາຍໃນ ສປປ ລາວ ແລະ ຕ່າງປະເທດ. | ທັນວາ. 2019 – ທັນວາ. 2021 | ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ |
| ຍົກລະດັບໂຄງຮ່າງການຈັດຕັ້ງລັດຖະບານໃຫ້ຂັ້ນທ້ອງຖິ່ນ ເພື່ອປັບປຸງການສື່ສານ, ການກວດກາຕິດຕາມ ແລະ ການຈັດຕັ້ງປະຕິບັດ | 8 | ຈັດກອງປະຊຸມປຶກສາຫາລືກ່ຽວກັບການຄ້າຜ່ານແດນ ໃນດ່ານສາກົນ 2 ແຫ່ງຄືດ່ານຊາຍແດນລະຫວ່າງ ສປປ ລາວ- ໄທ ແລະ ດ່ານຊາຍແດນ ສປປ ລາວ-ຫວຽດນາມ | ມັງກອນ-ມີນາ 2020 | ກົມການນຳເຂົ້າ ແລະ ສົ່ງອອກ , ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ |
| ປັບປຸງກົນໄກການປະຕິບັດງານຂອງຂະແໜງການລັດຖະບານທີ່ກ່ຽວຂອງ ແນ່ໃສ່ການຮ່ວມມືຢ່າງມີປະສິດທິພາບ | 9 | ຈັກກອງປະຊຸມປຶກສາຫາລື 4 ຄັ້ງ ໃນການສ້າງຄວາມສາມາດໃນປີ 2020 (ທຸກໆ 3 ເດືອນ) ໃຫ້ແກ່ເຈົ້າໜ້າທີ່ແຕ່ລະຂະແໜງການລັດຖະບານ ທີ່ມີສ່ວນຮັບຜິດຊອບໃນການຈັດຕັ້ງປະຕິບັດສັນຍາ CBTA ແລະ ACTS | ມັງກອນ – ທັນວາ 2020 | ທຸກຂະແໜງການ ລັດຖະບານທີ່ກ່ຽວຂ້ອງ |
| ການປະເມີນ ແລະ ແຜນດຳເນີນງານການຄ້າຜ່ານແດນໃນຕໍ່ໜ້າ | 10 | ການປະເມີນ ແຜນດຳເນີນງານການຄ້າຜ່ານແດນ ໃນໄລຍະກາງ | ສິງຫາ 2021 | ກົມການນຳເຂົ້າ ແລະ ສົ່ງອອກ, ຂະແໜງການລັດຖະບານທີ່ກ່ຽວຂ້ອງ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ |
| | 11 | ການປະເມີນ ແຜນດຳເນີນງານການຄ້າຜ່ານແດນ ໃນໄລຍະສຸດທ້າຍ | ມັງກອນ 2022 | ກົມການນຳເຂົ້າ ແລະ ສົ່ງອອກ, ຂະແໜງການລັດຖະບານທີ່ກ່ຽວຂ້ອງ, ສະພາການຄ້າ ແລະ ອຸດຫາສະກຳ ແຫ່ງຊາດ |
| | 12 | ກະກຽມ ແລະ ອະນຸມັດແຜນດຳເນີນງານການຄ້າຜ່ານແດນໃນຕໍ່ໜ້າ | 2022 | ກົມການນຳເຂົ້າ ແລະ ສົ່ງອອກ, ຂະແໜງການລັດຖະບານທີ່ກ່ຽວຂ້ອງ, ສະພາການຄ້າ ແລະ ອຸດຫາສະກຳ ແຫ່ງຊາດ |

## ຂັ້ນຕອນໃນຕໍ່ໜ້າ

1. ທົບທວນແຜນການດຳເນີນງານ ກັບ ກົມການນຳເຂົ້າ ແລະ ສົ່ງອອກ

2. ຮວບຮວມຄຳຄິດເຫັນຈາກ ຜູ້ທີ່ມີສ່ວນຮ່ວມ
3. ພິຈາລະນາຄືນ ກິດຈະກຳ/ໄລຍະເວລາປະຕິບັດງານຕາມຄຳເຫັນຂອງ ຜູ້ທີ່ມີສ່ວນຮ່ວມ
4. ຢັ້ງຢືນຜູ້ຮັບຜິດຊອບໃນແຕ່ລະກິດຈະກຳ
5. ພິຈາລະນາ ການແກ້ໄຂບັນຫາໃນແຕ່ລະລະດັບ (ລະດັບ ລັດຖະມົນຕີ, ໜ່ວຍງານປຶກສາຫາລື, ແລະ ອື່ນໆ.)
6. ກຳນົດຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນໃນລະດັບພາກພື້ນ ທີ່ສາມາດສະໜອງຄວາມຊ່ວຍເຫຼືອດ້ານວິຊາການ ແລະ ແຫຼ່ງເງິນທຶນ
7. ສະຫຼຸບງົບປະມານ ແລະ ການຊ່ວຍເຫຼືອ
8. ລິເລີ່ມແຜນດຳເນີນງານ